ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1848 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2019

**ຄຳສັ່ງ**

**ກ່ຽວກັບການຍົກເລີກ ການອອກໃບຢັ້ງຢືນນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນ ຄ້າ ຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019

ເພື່ອຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ໃຫ້ປະກົດຜົນເປັນຈິງ ແນ່ໃສ່ຫຼຸດຜ່ອນຂັ້ນຕອນໃນການດຳເນີນທຸລະກິດຂອງພາກທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວ, ສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ ຕາມເງື່ອນໄຂໃໝ່ໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:**

1. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ຍົກເລີກການອອກໃບຢັ້ງຢືນການນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ໃນຂອບເຂດທົ່ວປະເທດ.
2. ໃຫ້ບັນດາຜູ້ດຳເນີນກິດຈະການໂຮງງານຜະລິດ ແລະ ປະກອບຍານພາຫະນະ ສ້າງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ຕາມຕາຕະລາງ ອ ແລ້ວສົ່ງໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ກ່ອນວັນທີ 10 ເດືອນທັນວາຂອງທຸກໆປີ ເພື່ອຮັບຮອງ ແລະ ສັງລວມຂໍ້ມູນລາຍງານຂັ້ນເທິງ.
3. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ປະສານສົມທົບກັບ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກົມພາສີ, ກະຊວງການເງິນ ເພື່ອແຈ້ງເຖິງເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ແລະ ພ້ອມກັນເຜີຍແຜ່ຄຳສັ່ງສະບັບນີ້ ໃຫ້ທັງພາກລັດ ແລະ ພາກທຸລະກິດ ຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຮັບປະສິດທິຜົນສູງ.
4. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ, ນິຕິກຳໃດ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ປະກາດໃຊ້ໃນໄລຍະຜ່ານມາ ທີ່ຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ